"ຮ່າງ"

# ບົດປະກອບຄໍາເຫັນກ່າວເປີດ ຂອງ ທ່ານ ໄຊສີ ສັນຕິວົງ, ລັດຖະມົນຕີ ກະຊວງຍຸຕິທໍາ

# ຕໍ່ກອງປະຊຸມໜ່ວຍງານດ້ານການປົກຄອງ

# ຄັ້ງວັນທີ 13 ພະຈິກ 2019

ຮຽນ: ທ່ານ ຄໍາໝັ້ນ ສູນວິເລີດ, ລັດຖະມົນຕີກະຊວງພາຍໃນ, ທີ່ນັບຖື

- ທ່ານ ນາງ ຣິຄາດາ ຣີເຈີ, ຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການ ພັດທະນາ ປະຈໍາ ສປປ ລາວ ທີ່ນັບຖື ແລະ ຮັກແພງ;
- ທ່ານ ຊອນ ພລັງຊົວ ກູໂນດ, ຜູ້ອໍານວຍການອົງການຮ່ວມມືເພື່ອ ການພັດທະນາ ຂອງ ປະເທດສະວິດເຊີແລນ ປະຈໍາພາກພື້ນ ແມ່ນໍ້າຂອງ;
- ບັນດາທ່ານຜູ້ຕາງໜ້າຈາກບັນດາກະຊວງ, ອົງການຂອງລັດ, ສະຖານທູດ ແລະ ຄູ່ຮ່ວມພັດທະນາ ທີ່ນັບຖື;
- ບັນດາຜູ້ຕາງໜ້າຈາກບັນດາຄູ່ຮ່ວມພັດທະນາ ແລະ ອົງ ການຈັດຕັ້ງສາກົນທີ່ສັງກັດ ລັດຖະບານ ແລະ ບໍ່ສັງກັດລັດຖະບານ , ບັນດາທ່ານຊ່ຽວຊານ ຈາກຕ່າງປະເທດ, ບັນດາທ່ານຍິງ ແລະ ທ່ານຊາຍ ທີ່ຮັກແພງ;

ຂ້າພະເຈົ້າຮູ້ສຶກເປັນກຽດ ແລະ ພາກພູມໃຈເປັນ ຢ່າງຍິ່ງ ທີ່ໄດ້ມີໂອກາດມາ ເຂົ້າຮ່ວມ ແລະ ເປັນປະທານຮ່ວມໃນກອງປະຊຸມປະຈໍາປີ 2019 ຂອງໜ່ວຍງານດ້ານ ການປົກຄອງ ເພື່ອກະກຽມໃສ່ກອງປະຊຸມໂຕະມົນ ທີ່ໃກ້ຈະໝູນວຽນມາເຖິງນີ້ ເພື່ອ ຮັບປະກັນໃຫ້ການປະຕິບັດວຽກງານ ໃນຂະແໜງການປົກຄອງໃຫ້ໄດ້ຮັບ ປະສິດທິພາບ ແລະ ປະສິດທິຜົນສູງສຸດ.

ຂ້າພະເຈົ້າ ຂໍຕາງໜ້າໃຫ້ແກ່ໜ່ວຍງານຍ່ອຍທາງດ້ານຂະແໜງກົດໝາຍ ແລະ ຍຸຕິທໍາ ກໍຄືໃນນາມສ່ວນຕົວ ຂໍສະ ແດງຄວາມຂອບໃຈເປັນຢ່າງສູງ ມາຍັງ

ບັນດາທ່ານຜູ້ຕາງໜ້າຈາກຄູ່ຮ່ວມພັດທະນາ ອົງການ ຈັດຕັ້ງສາກົນທີ່ສັງກັດລັດຖະບານ ແລະ ບໍ່ສັງກັດລັດຖະບານ ທີ່ໄດ້ສະລະເວລາອັນມີຄ່າ ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້.

**ບັນດາທ່ານຍິງ ແລະ ທ່ານຊາຍ ທີ່ນັບຖື ແລະ ຮັກແພງ**

ດັ່ງທີ່ບັນດາທ່ານຮູ້ແລ້ວວ່າລັດຖະບານແຫ່ງ ສປປ ລາວ ໄດ້ຈັດຕັ້ງຜັນຂະຫຍາຍແຜນພັດ ທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ VIII (2016-2020) ໃນໄລຍະທ້າຍ ສະໄໝ ແລະ ໄດ້ສືບຕໍ່ຈັດຕັ້ງປະຕິບັດແຜນຍຸດທະສາດສ້າງລັດທີ່ປົກຄອງດ້ວຍກົດໝາຍ ໄລຍະທ້າຍສະ ໄໝເຊັ່ນກັນ. ຊຶ່ງສິ່ງນີ້ໄດ້ຊີ້ໃຫ້ເຫັນວ່າ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ ເປັນບຸລິມະສິດອັນສຳຄັນ ແລະ ຈຳເປັນຂອງລັດຖະບານ ເພື່ອເຮັດໃຫ້ສັງຄົມມີຄວາມຍຸຕິທຳ ໄປຄຽງຄູ່ກັບການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ມີຄວາມຍືນຍົງ ຕາມທິດສີຂຽວ, ສາມາດເຊື່ອມໂຍງເຂົ້າປະຊາຄົມເສດຖະກິດອາຊຽນ, ພາກພື້ນ ແລະ ສາກົນ ເພື່ອນຳພາປະເທດຊາດຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ ໃນປີ 2020.

**ບັນດາທ່ານ ທີ່ຮັກແພງ**!

ກະຊວງຍຸຕິທຳ ໃນນາມເປັນຈຸດໃຈກາງໃນການຈັດຕັ້ງປະຕິບັດ ການສ້າງລັດທີ່ປົກ ຄອງດ້ວຍກົດໝາຍ ທີ່ໄດ້ຮັບການສະໜັບສະໜູນຈາກຄູ່ຮ່ວມພັດທະນາຫຼາຍໂຄງການເຊັ່ນ: ໂຄງການສະໜັບສະໜູນທາງດ້ານຍຸດທະສາດ ເພື່ອການສ້າງຄວາມເຂັ້ມແຂງ ໃຫ້ແກ່ການປົກຄອງລັດດ້ວຍກົດໝາຍ (ໂຄງ ການ ສາມເອັດສ ລູອໍອບລໍ (3S-RoL) ເຊິ່ງໄດ້ຮັບການສະໜັບສະໜູນຈາກ ອົງການສະຫະປະຊາຊາດເພື່ອການພັດທະນາ; ແຜນງານການມີສ່ວນຮ່ວມຂອງປະຊາຊົນ ຕໍ່ວຽກງານການປົກຄອງ ແລະ ການສ້າງລັດທີ່ປົກຄອງ ດ້ວຍກົດໝາຍ (ແຜນງານ ເຊກາ (CEGGA) ໂດຍໄດ້ຮັບຈາກ ສະຫະພາບເອີລົບ, ສະວິດເຊີແລນ ແລະ ເຍຍລະມັນ; ໂຄງການສະໜັບສະໜູນການຝຶກອົບຮົມ ແລະ ການສິດສອນກົດໝາຍ ເພື່ອສ້າງຄວາມເຂັ້ມ ແຂງໃນການສ້າງລັດທີ່ປົກຄອງດ້ວຍກົດໝາຍ (ໂຄງການ ລາວ/031) ໄດ້ຮັບການສະໜັບ ສະໜູນຈາກລັດຖະບານ ລຸກຊໍາບວກ; ແລະ ໂຄງການສົ່ງເສີມ

ການພັດທະນາ ແລະ ສ້າງຄວາມເຂັ້ມແຂງລັດທີ່ປົກຄອງດ້ວຍ ກົດໝາຍ ໃນຂົງເຂດ ຍຸຕິທຳ ຢູ່ໃນ ສປປ ລາວ (JICA III (J-RoL).

ບັນດາທ່ານ ການປະກອບສ່ວນທັງໝົດນີ້ ລ້ວນແຕ່ເປັນທ່າແຮງ ໃຫ້ແກ່ການຈັດຕັ້ງປະຕິບັດການສ້າງລັດທີ່ປົກຄອງດ້ວຍກົດໝາຍ ໃຫ້ບັນລຸຜົນຕາມຄາດໝາຍທີ່ໄດ້ວາງໄວ້. ສະນັ້ນ, ຂ້າພະເຈົ້າ ຂໍລາຍງານຜົນສຳເລັດບາງກິດຈະກຳທີ່ພົ້ນເດັ່ນ ທີ່ໄດ້ປະຕິບັດສຳ ເລັດ ໃນປີ 2019 ໃຫ້ບັນດາທ່ານໄດ້ຮັບຊາບດັ່ງນີ້:

**ສຳລັບອົງການທີ່ວາງແຜນຮ່ວມກັບໜ່ວຍງານດ້ານການປົກຄອງແມ່ນໄດ້ສຳເລັດຄື**:

- ໄດ້ຈັດກອງປະຊຸມຍ່ອຍດ້ານນິຕິ ໃນຫົວຂໍ້ ການເຜີຍແຜ່ປະມວນກົດໝາຍອາຍາ, ຂັ້ນຕອນການດຳເນີນຄະດີອາຍາ ແລະ ການເຂົ້າເຖິງຂະບວນຍຸຕິທຳ ສຳລັບກຸ່ມ ຄົນທີ່ຖືກເຄາະຮ້າຍ ໂດຍສະເພາະແມ່ນ ຄົນພິການ ແລະ ແມ່ຍິງ ໃນວັນທີ 29 ຕຸລາ 2019 ທີ່ຜ່ານມາ;
- ແລະ ຕາມແຜນການຈະໄດ້ຈັດກອງປະຊຸມສຳມະນາໃນຫົວຂໍ້ ການສ້າງລັດທີ່ປົກ ຄອງດ້ວຍກົດໝາຍ ໃນກາງເດືອນ ທັນວາ 2019 ທີ່ຈະມາເຖິງນີ້. ໂດຍຈະໄດ້ ເຊີນເອົາບັນດາຜູ້ຊ່ຽວຊານຈາກ 7 ປະເທດ (ສະວີເດັນ, ການາດາ, ເຢຍລະມັນ, ສິງກະໂປ, ສປ ຈີນ, ສສ ຫວຽດນາມ ແລະ ປະເທດ ອິນໂດເນຍ) ເຂົ້າຮ່ວມ ເພື່ອໃຫ້ການແລກປ່ຽນບົດຮຽນທີ່ດີຈາກປະເທດຂອງເຂົາເຈົ້າໃຫ້ແກ່ ສປປ ລາວ.

**ນອກຈາກນັ້ນ**, **ບັນດາຄູ່ຮ່ວມພັດທະນາຍັງໄດ້ໃຫ້ການຊ່ວຍເຫຼືອເຂົ້າໃນຂະແໜງຍຸຕິທຳ ດັ່ງນີ້**:

- ໃນການຈັດພິມປຶ້ມປະ ມວນກົດໝາຍ ຈຳນວນ 10,000 ຫົວສຳລັບແຈກຢາຍໃຫ້ ແກ່ພະນັກງານ ແລະ ປະຊາຊົນ ແລະ ໄດ້ເປີດພິທີມອບຮັບປຶ້ມປະມວນກົດໝາຍ ອາຍາ ໃນວັນທີ 10 ກັນຍາ 2019;
- ໂຄງການ ໄຈກາ ກໍໄດ້ສືບຕໍ່ໃຫ້ການສະໜັບສະໜູນໃນການ ສ້າງປະມວນກົດໝາຍ ແພ່ງ ໃນການກະກຽມສະເໜີຕໍ່ປະທານປະເທດໃນການປະກາດໃຊ້ ແລະ ວາງແຜນ ໃນການໂຄສະນາເຜີຍແຜ່;

- ໄດ້ຊ່ວຍເປີດຫ້ອງການຊ່ວຍເຫຼືອທາງດ້ານກົດໝາຍຢູ່ 6 ເມືອງ ຂອງ 5 ແຂວງ (ແຂວງບໍ່ແກ້ວ, ຫຼວງນ້ຳທາ, ບໍລິຄຳໄຊ, ຄຳມ່ວນ ແລະ ອັດຕະປື) ຊຶ່ງປັດຈຸບັນ ມີຫ້ອງການຊ່ວຍເຫຼືອທັງໝົດ 17 ຫ້ອງການ ຢູ່ 15 ແຂວງ.
- ນອກຈາກນັ້ນ, ຍັງມີກິດຈະກຳອື່ນໆທີ່ປິ່ນອ້ອມຮ່ວມກັບບັນດາຄູ່ຮ່ວມພັດທະນາໃຫ້ ການຊ່ວຍເຫຼືອ.

ບັນດາທ່ານ ບັນດາຜົນສຳເລັດທັງໝົດນີ້ ກໍລ້ວນແຕ່ເປັນຂີດໝາຍອັນດີ ໃຫ້ແກ່ການປັບປຸງລະບົບຍຸຕິທຳ ຂອງ ສປປ ລາວ ໃຫ້ມີຄວາມສັກສິດ ບົນພື້ນຖານການມີສ່ວນຮ່ວມຂອງປະຊາຊົນ ໃນການກໍ່ສ້າງ ແລະ ປັບປຸງລະບຽບກົດໝາຍໃຫ້ສອດຄ່ອງ ກັບສະພາບການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ. ອັນນີ້ກໍເພື່ອແນ່ໃສ່ໃຫ້ພົນລະເມືອງລາວທຸກຄົນມີສະຕິເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ, ພ້ອມກັນນັ້ນ, ກໍຍັງສົ່ງເສີມການເຂົ້າເຖິງລະບົບຍຸຕິທຳ ຂອງປະຊາຊົນລາວທຸກເພດໄວໃຫ້ໄດ້ຮັບຄວາມຍຸຕິທຳເພີ່ມຂຶ້ນເທື່ອລະກ້າວ.

**ບັນດາທ່ານທີ່ຮັກແພງ ແລະ ນັບຖື**!

ກອງປະຊຸມໃນມື້ນີ້ ພວກເຮົາຈະໄດ້ທົບທວນຄືນບັນດາຜົນສຳເລັດຂອງການຈັດຕັ້ງປະຕິບັດແຜນຍຸດທະສາດ ໃນຂະແໜງກົດໝາຍ ແລະ ຍຸຕິທຳ ພ້ອມທັງຕີລາຄາ ແລະ ປຶກສາຫາລື ກ່ຽວກັບການຈັດຕັ້ງປະຕິບັດບັນດາກິດຈະກຳຕ່າງໆທີ່ໄດ້ຈັດຕັ້ງປະຕິບັດສຳເລັດມາ ເພື່ອສືບຕໍ່ປະຕິບັດແຜນຕໍ່ໜ້າ ໃຫ້ບັນລຸຜົນສຳເລັດຕາມກຳນົດທີ່ຄາດໝາຍ.

**ບັນດາທ່ານ**!

ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ ຄະນະກອງເລຂາໜ່ວຍງານການປົກຄອງທີ່ດີ, ໂຄງການ ສາມເອັສ ລູອ໋ອບລໍ (3S-RoL), ອົງການ UNDP, ທີ່ໄດ້ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍແຜນກິດຈະກຳ ເພື່ອຊຸກຍູ້ໃຫ້**ແກ່** ຂະແໜງຍຸຕິທຳ.

ຂໍສະແດງຄວາມຍ້ອງຍໍຊົມເຊີຍ ຕໍ່ການປະກອບສ່ວນອັນສຳຄັນຂອງບັນດາປະເທດຄູ່ຮ່ວມພັດທະນາ, ສະຫະພາບເອີຣົບ, ແຜນງານ ເຊກາ (CEGGA), ໂຄງການ

ລາວ/031 (Lux.Dev) ແລະ ອົງການຈັດຕັ້ງສາກົນ ທີ່ສັງກັດລັດຖະບານ ແລະ ບໍ່ສັງກັດລັດຖະບານ ທີ່ໄດ້ໃຫ້ການສະໜັບສະໜູນຢ່າງຕັ້ງໜ້າ ເຂົ້າໃນວຽກງານຍຸຕິທຳ ຂອງ ສປປ ລາວ. ຂ້າພະເຈົ້າຫວັງເປັນຢ່າງຍິ່ງວ່າຈະໄດ້ຮັບການສືບຕໍ່ ແລະ ປະກອບສ່ວນເຂົ້າໃນຂະແໜງດັ່ງກ່າວຢ່າງຕໍ່ເນື່ອງໃນຕໍ່ໜ້າ.

**ຂໍອວຍພອນບັນດາທັງໝົດ**

"**ຂໍຂອບໃຈ**"

"ຮ່າງ"

# ບົດຄຳເຫັນກ່າວປິດ ຂອງ ທ່ານ ໄຊສີ ສັນຕິວົງ, ລັດຖະມົນຕີກະຊວງ ຍຸຕິທຳ

# ຕໍ່ກອງປະຊຸມໜ່ວຍງານດ້ານການປົກຄອງ

# ຄັ້ງວັນທີ 13 ພະຈິກ 2019

ຮຽນ: ທ່ານ ຄຳໝັ້ນ ສູນວິເລີດ, ລັດຖະມົນຕີກະຊວງພາຍໃນ, ທີ່ນັບຖື

- ທ່ານ ນາງ ຣິຄາດາ ຣິເຈີ, ຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການ ພັດທະນາ ປະຈຳ ສປປ ລາວ ທີ່ນັບຖື ແລະ ຮັກແພງ;
- ທ່ານ ຊອນ ພລັງຊົວ ກູໂນດ, ຜູ້ອຳນວຍການອົງການຮ່ວມືເພື່ອ ການພັດທະນາ ຂອງ ປະເທດສະວິດເຊີແລນ ປະຈຳພາກພື້ນ ແມ່ນ້ຳ້ຂອງ;
- ບັນດາທ່ານຜູ້ຕາງໜ້າຈາກບັນດາກະຊວງ, ອົງການຂອງລັດ, ສະຖານທູດ ແລະ ຄູ່ຮ່ວມພັດທະນາ ທີ່ຮັບຖື;
- ບັນດາຜູ້ຕາງໜ້າຈາກບັນດ່ຄູ່ຮ່ວມພັດທະນາ ແລະ ອົງ ການຈັດຕັ້ງສາກົນທີ່ສັງກັດ ລັດຖະບານ ແລະ ບໍ່ສັງກັດລັດຖະບານ , ບັນດາທ່ານຊ່ຽວຊານ ຈາກຕ່າງປະເທດ, ບັນດາທ່ານຍິງ ແລະ ທ່ານຊາຍ ທີ່ຮັກແພງ.

## ບັນດາແຂກທີ່ມີກຽດ ທີ່ນັບຖື ແລະ ຮັກແພງ

ຂ້າພະເຈົ້າຂໍສະແດງຄວາມຂອບໃຈ ແລະ ຊົມເຊີຍມາຍັງບັນດາທ່ານ ທີ່ໄດ້ມີການແລກປ່ຽນສົນທະນາ ແລະ ປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ແລະ ອຸດົມສົມບູນ. ຜ່ານການຮັບຟັງການລາຍງານ ບົດລາຍງານຄວາມຄືບໜ້າຂອງໜ່ວຍງານດ້ານການປົກ ຄອງ ທີ່ພວກເຮົາສາມາດຈັດຕັ້ງປະຕິບັດ

ສຳເລັດ ໃນປີ 2019 ແລະ ທິດທາງແຜນການ ສຳລັບປີ 2020; ແລະ ການປະເມີນຂີດຄວາມສາມາດ ຂອງກອງເລຂາໜ່ວຍງານຍ່ອຍ ດ້ານການປົກຄອງ.

ຂ້າພະເຈົ້າຂໍຢັ້ງຢືນຄືນວ່າ ວຽກງານບູລະນະ ການປົກຄອງແຫ່ງຊາດເວົ້າລວມ, ເວົ້າ ສະເພາະວຽກງານການປົກຄອງທີ່ດີ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ ແມ່ນເປັນ ອົງປະກອບທີ່ສຳຄັນເຂົ້າໃນການຊຸກຍູ້ໃຫ້ແກ່ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະ ກິດ-ສັງຄົມ ແຫ່ງຊາດ ຄັ້ງທີ VIII ໃຫ້ມີຄວາມຍືນຍົງ ຕາມທິດສີຂຽວ ໃຫ້ປະກົດຜົນເປັນຈິງ ເພື່ອເຮັດໃຫ້ ສປປ ລາວ ຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາໃນປີ 2020.

ຂໍພະເຈົ້າຂໍຢ່ຳ້ຄືນວ່າ ຂະແໜງກົດໝາຍ ແລະ ຍຸຕິທຳ ຈະສືບຕໍ່ປະຕິບັດແຜນງານ, ໂຄງການ ແລະ ກິດຈະກຳຕ່າງໆ ໃນການຈັດຕັ້ງປະຕິບັດແຜນຍຸດທະສາດ ການສ້າງລັດທີ່ ປົກຄອງດ້ວຍກົດໝາຍ ໃນໄລຍະທ້າຍສະໄໝປີ 2020 ຢ່າງໜັກແໜ້ນ ຊຶ່ງໃນຕໍ່ໜ້ານີ້ ພວກເຮົາຈະໄດ້ ສືບຕໍ່ປຶກສາຫາລືໃນການຈັດຕັ້ງປະຕິບັດກກິດຈະກຳໃຫ້ບັນລຸຜົນ ແລະ ລະດົມທຶນຮອນ ຈາກບັນດາປະເທດຄູ່ຮ່ວມພັດທະນາ ແລະ ພາກສ່ວນອື່ນໆເຂົ້າໃນກິດຈະກຳເຫຼົ່ານີ້ໃຫ້ເພີ້ມຂຶ້ນ ເພື່ອຕອບສະໜອງໃຫ້ໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າວຽກຕົວຈິງ.

ຂ້າພະເຈົ້າຕີລາຄາສູງຕໍ່ ຄຳຄິດ-ຄຳເຫັນ ຂອງບັນດາທ່ານ ທີ່ມີຕໍ່ກອງປະຊຸມໃນມື້ນີ້ ເຊິ່ງມັນຈະເປັນທ່າແຮງທີ່ສຳຄັນອັນໜຶ່ງໃນການຊຸກຍູ້ໃຫ້ແກ່ກອງປະຊຸມໂຕະມົນທີ່ຈະຈັດຂຶ້ນໃນທ້າຍເດືອນນີ້ ໃຫ້ດຳເນີນໄປດ້ວຍຜົນສຳເລັດອັນຈົບງາມ ແລະ ຂ້າພະເຈົ້າຫວັງເປັນຢ່າງຍິ່ງວ່າ ຂະແໜງກົດໝາຍ ກໍຄືຂະແໜງຍຸຕິທຳ ຈະໄດ້ຮັບການສະໜັບສະໜູນ ຈາກບັນດາປະເທດຄູ່ຮ່ວມພັດທະນາ, ບັນດາອົງການຈັດຕັ້ງສາກົນ ທີ່ສັງກັດລັດຖະບານ ແລະ ບໍ່ສັງກັດລັດຖະບານ ຢ່າງຕັ້ງໜ້າ ແລະ ເພີ້ມຂຶ້ນໃນອານາຄົດ.

ທ້າຍສຸດນີ້, ຂ້າພະເຈົ້າຂໍອວຍພອນໄຊອັນປະເສີດໃຫ້ແກ່ບັນດາແຂກທີ່ມີກຽດ ທີ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ຈົ່ງມີແຕ່ສຸຂະພາບແຂງແຮງ, ມີພາລະໄມສົມບູນ, ປະສົບຜົນສຳເລັດ ໃນໜ້າທີ່ວຽກງານ ແລະ ມີຄວາມຜາສຸກໃນຊີວິດຄອບຄົວຕະຫຼອດໄປ.

# ຂໍຂອບໃຈ